

## ສິ່ງທີ່ຈະໄດ້ພົບອ້ອມຮອບຕົວເມືອງ

ຕັ້ງຢູ່ແຄມຝັ່ງແມ່ນ້ຳຂອງ ຫ່າງຈາກເທດສະບານເມືອງປາກເຊ ພາກໃຕ້ຂອງລາວ ປະມານ 35 ກິໂລແມັດ, ເມືອງຈຳປາສັກ ມີຊື່ສຽງໂດ່ງດັງຍ້ອນວັດພູ, ເຊິ່ງເປັນສະຖານບູຮານໃນຍຸກກ່ອນ ແລະ ສະໄໝດຽວກັບອັງກໍວັດ ແລະ ໄດ້ຖືກຮັບຮອງເຂົ້າເປັນມໍລະດົກໂລກໂດຍອົງການ UNESCO. ກຸ່ມສະຖານບູຮານວັດພູ ແລະ ເມືອງບູຮານທີ່ຢູ່ໃກ້ຄຽງແມ່ນສະຖານທີ່ໆມີຄວາມສຳຄັນຫຼາຍໃນລະຫວ່າງສັດຕະວັດທີ 5 ແລະ ສະຕະວັດທີ 15, ດັ່ງທີ່ເຫັນຈາກການຄົ້ນພົບເປັນປະຈຳໃນລະຫວ່າງຂະບວນການຂຸດຄົ້ນທາງບູຮານວິທະຍາຕ່າງໆ.

ແຕ່ນອກເໜືອຈາກການໄປຢ້ຽມຢາມວັດພູແລ້ວ, ເມືອງຈຳປາສັກຍັງເປັນສະຖານທີ່ໆສົມຄວນຈະໄປທ່ຽວຊົມ ແລະ ເປັນໂອກາດດີທີ່ທ່ານຈະໄດ້ສຳຜັດກັບສະເໜ່ ແລະ ບັນຍາກາດອັນງຽບສະຫງົບ: ມໍລະດົກສະຖາປັດຕະຍະກຳ ແລະ ອາຄານຍຸກອານານິຄົມໃນໃຈກາງເມືອງ, ທຳມະຊາດອັນບໍລິສຸດ, ງານຫັດຖະກຳ, ການພົບປະ, ວັດທະນະທຳອັນເປັນເອກະລັກແບບ ດັ້ງເດີມ...

ມີທີ່ພັກໃຫ້ເລືອກ ຕັ້ງແຕ່ເຮືອນພັກ ທຳມະດາ ຕະຫຼອດເຖິງຣີສອດລະດັບ 4ດາວ, ເມືອງຈຳປາສັກຈຶ່ງຖືເປັນ ທາງເຂົ້າ ທີ່ສົມບູນແບບສຳລັບການສຳຫຼວດພາກໃຕ້ຂອງລາວ, ພູພຽງບໍລະເວນ ແລະ 4000 ດອນ.



### ວັດພູ

ພື້ນທີ່ພູມມິທັດວັດທະນະທຳເມືອງຈຳປາສັກ, ລວມທັງກຸ່ມສະຖານບູຮານວັດພູເປັນຫຼັກຖານອັນໂດດເດັ່ນທີ່ສະແດງໃຫ້ເຫັນເຖິງການອອກແບບທາງພູມິທັດທີ່ຍັງຄົງໄດ້ຮັບການຮັກສາໄວ້ເປັນຢ່າງດີຫລາຍກວ່າ 1,000 ປີມາແລ້ວ. ເປັນການອອກແບບທີ່ສະທ້ອນໃຫ້ເຫັນເຖິງຄວາມເຊື່ອຂອງຊາວຮິນດູ ໃນການ ສະແດງສາຍພົວພັນລະຫວ່າງມະນຸດກັບທຳມະຊາດ, ໂດຍ ນຳໃຊ້ເສັ້ນແກນກາງທີ່ກຳນົດຈາກຈອມສູງສຸດຂອງພູສັກສິດ ລົງສູ່ແຄມຝັ່ງແມ່ນ້ຳ ເພື່ອຈັດວາງບັນດາອາຄານເທວະສະຖານໃຫ້ມີຮູບລັງເລຂາຄະນິດ, ທຳໄຫວ້ ແລະ ລະບົບການຈັດການນ້ຳ ທີ່ມີຄວາມ ຍາວຫລາຍກວ່າ 10ກິໂລແມັດ. ເມືອງບູຮານສອງແຫ່ງທີ່ໄດ້ຮັບການວາງແຜນຜັງຢູ່ແຄມຝັ່ງແມ່ນ້ຳຂອງກໍ່ ເປັນສ່ວນໜຶ່ງຂອງພື້ນທີ່ບູຮານດັ່ງກ່າວ, ລວມທັງພູເກົ້າ. ສະຖານທີ່ທັງໝົດສະແດງໃຫ້ເຫັນເຖິງ ພັດທະນາການອັນຍາວນານຂອງອະນາຈັກຂະເໝນບູຮານ ເລີ່ມແຕ່ຊ່ວງຄິດຕະສະຕະວັດທີ 5-15. ທີ່ຕັ້ງຂອງວັດພູ ຢູ່ຫ່າງຈາກເມືອງຈຳປາສັກປະມານ 10ກິໂລແມັດ ແລະ ສາມາດເຂົ້າເຖິງໄດ້ຢ່າງງ່າຍດາຍຈາກໂຕເມືອງ, ເປີດໃຫ້ເຂົ້າຊົມທຸກວັນ ແຕ່8ໂມງເຊົ້າ ຫາ6ໂມງແລງ.

### ດອນແດງ

ດອນແດງຕັ້ງຢູ່ກາງລຳແມ່ນ້ຳຂອງ ກົງກັນຂ້າມກັບເມືອງຈຳປາສັກ ແລະ ມີບ່ອນໃຫ້ທ່ຽວຫຼິ້ນທີ່ສົມບູນແບບສຳລັບການເດີນທາງ ເຄິ່ງ ຫຼື ເຕັມມື້. ຄວາມຍາວພຽງແຕ່ 8 ກິໂລແມັດ, ດອນແຫ່ງນີ້ຈຶ່ງເປັນສະຫວັນແຫ່ງຄວາມສະຫງົບງຽບ. ສາມາດທ່ອງທ່ຽວໄດ້ດ້ວຍການຍ່າງ ຫຼື ຂີ່ລົດຖີບ, ແລະ ເສັ້ນທາງອ້ອມຮອບນັ້ນມີທັງທັດສະນີຍະພາບຂອງແມ່ນ້ຳຂອງ ແລະ ໂອກາດທີ່ຈະໄດ້ສຳຜັດກັບທຳມະຊາດ ແລະ ວິຖີຊີວິດຂອງປະຊາຊົນໃນທ້ອງຖິ່ນ, ຈາກທົ່ງນາຈົນເຖິງໝູ່ບ້ານ. ທ່ານຈະບໍ່ພົບເຫັນລົດໃຫຍ່ໃດໆຢູ່ທີ່ນີ້, ແຕ່ທ່ານຈະຕ້ອງປະຫລາດໃຈກັບຄວາມມີນ້ຳໃຈ ແລະ ການຕ້ອນຮັບຂອງຄົນໃນທ້ອງຖິ່ນ.

ດອນດັ່ງກ່າວສາມາດເຂົ້າເຖິງໄດ້ໂດຍເຮືອຈາກທ່າເຮືອຕ່າງໆຢູ່ທາງຝັ່ງຈຳປາສັກ.



### ເມືອງຈຳປາສັກ

ເປັນເມືອງນ້ອຍໆທີ່ຕັ້ງຢູ່ຝັ່ງຕາເວັນຕົກຂອງແມ່ນ້ຳຂອງ, ຫ່າງຈາກເທດສະບານເມືອງປາກເຊໄປທາງທິດໃຕ້ປະມານ 30ກິໂລແມັດ. ຄັ້ງໜຶ່ງເຄີຍເປັນເມືອງເອກ ຂອງອານາຈັກຈຳປາສັກ. ຕາມຖະໜົນເສັ້ນຫຼັກ, ເຊິ່ງຍາວປະມານ 6 ກິໂລແມັດ, ລຽບຕາມແມ່ນ້ຳຂອງ, ທ່ານຈະພົບເຫັນຕົວຢ່າງທີ່ໂດດເດັ່ນຂອງເຮືອນໄມ້ແບບດັ້ງເດີມ, ອາຄານສະໄໝອານານິຄົມ ແລະ ວັດວາອາຮາມ. ຕາມໝູ່ບ້ານຍັງເຕັມໄປດ້ວຍຮ້ານຄ້າ ແລະ ຮ້ານອາຫານທ້ອງຖິ່ນທີ່ເຊີນຊວນໃຫ້ທ່ານມາຜ່ອນຄາຍໄດ້: ນັ່ງເທິງລະບຽງ ແລະ ເພີດເພີນໄປກັບທິວທັດຂອງແມ່ນ້ຳຂອງ... ໃນຂະນະທີ່ໄດ້ຊີມອາຫານທ້ອງຖິ່ນ, ໂດຍສະເພາະແມ່ນປາຈາກແມ່ນ້ຳຂອງອັນເລີດຣົດ, ຫຼື ດື່ມເບຍເຢັນໆ ຫຼື ແມ່ນແຕ່ກາເຟຈາກພູພຽງບໍລະເວນທີ່ຢູ່ໃກ້ໆ ຈັກຈອກ, ທ່ານຈະມີຄວາມຮູ້ສຶກວ່າເວລາສັ້ນເກີນໄປ!



### ບໍ່ຄວນພາດ

ໂຮງລະຄອນຫຸ່ນເງົາ (ປະລັດຕີ້): ໂຮງລະຄອນຫຸ່ນເງົາ (ປະລັດຕີ້) ໄດ້ຟື້ນຟູຮີດຄອງປະເພນີເກົ່າແກ່ທີ່ຖືກລືມໄປ, ມັນໄດ້ນຳເອົານັກດົນຕີ, ນັກຮ້ອງ ແລະ ນັກເຊີດຫຸ່ນເຂົ້າມາເຕົ້າໂຮມກັນ. ການສະແດງແມ່ນໄດ້ຮັບແຮງບັນດານໃຈຈາກ ນິທານເລື່ອງພະລັກພະລາມ.

ໃນຊ່ວງລະດູຮ້ອນ, ຄະນະສະແດງລະຄອນ ຈະເຮັດການສະແດງອາທິດລະ 4ຄັ້ງ ໃນເວລາຄ່ຳຄືນຢູ່ດ້ານຫຼັງຂອງສູນຂໍ້ມູນຂ່າວ ສານການທ່ອງທ່ຽວເມືອງຈຳປາສັກ. ເປັນສິ່ງທີ່ຕ້ອງເບິ່ງ ບໍ່ຄວນພາດ ເວລາມາທ່ຽວຈຳປາສັກ!



## ການເດີນທາງຮອບຈໍາປາສັກ

ມີຫຼາຍທາງເລືອກ. ບັນດາເຮືອນພັກຕ່າງໆຈະຊ່ວຍທ່ານໃນການຕິດຕໍ່ຄົນຂັບລົດຕຸ໊ກຕຸ໊ກເພື່ອຈັດສັນການເດີນທາງຂອງທ່ານ. ຖ້າທ່ານຕ້ອງການຄວາມເປັນອິດສະຫຼະຫຼາຍຂຶ້ນ, ບຸກຄົນ ແລະ ເຮືອນພັກຈໍານວນຫຼາຍກໍມີລົດຈັກ ຫຼື ລົດຖີບໃຫ້ເຊົ່າ. ສູນຂໍ້ມູນຂ່າວສານການທ່ອງທ່ຽວຈະຊ່ວຍທ່ານໃນການຈັດຫາເຮືອໄປທ່ຽວດອນແດງ, ວັດໂຕ໊ະໂມ໊ະ ຫຼື ເພີດເພີນກັບການຊົມຕາເວັນຕົກຢູ່ກາງແມ່ນໍ້າຂອງ.



## ເສັ້ນທາງທ່ອງທ່ຽວຕ່າງໆໃນເມືອງຈໍາປາສັກ

ເສັ້ນທາງຕ່າງໆ, ເຊິ່ງສາມາດເຂົ້າເຖິງໄດ້ສໍາລັບນັກຍ່າງຜູ້ເລີ່ມຕົ້ນ ຫຼື ຜູ້ ມີປະສົບການແລ້ວ, ຊ່ວຍໃຫ້ທ່ານສາມາດຄົ້ນພົບມໍລະດົກບູຮານ ແລະ ສະຖາປັດຕະຍະກໍາຂອງພື້ນທີ່ອ້ອມຮອບ, ໂດຍມີ ຫຼື ບໍ່ມີຄູ່ມືການທ່ອງທ່ຽວກໍໄດ້. ນອກຈາກນີ້, ຍັງໃຫ້ທ່ານໄດ້ສໍາຜັດກັບຄວາມງຽບສະຫງົບຂອງພື້ນທີ່, ເພີດເພີນກັບແມ່ນໍ້າຂອງ, ດອນແດງ ແລະ ທໍາມະຊາດອ້ອມຂ້າງ, ໄດ້ໃກ້ຊິດກັບວິຖີຊີວິດຂອງປະຊາຊົນໃນທ້ອງຖິ່ນ ແລະ ຮັບຮູ້ເຖິງຄວາມຫຼາກຫຼາຍທາງດ້ານວັດທະນະທໍາ ແລະ ຫັດຖະກໍາຢູ່ພາກໃຕ້ຂອງລາວ.

**ລາຍລະອຽດເພີ່ມເຕີມສາມາດເບິ່ງໄດ້ຕາມຂໍ້ມູນລຸ່ມນີ້:**


ສູນຂໍ້ມູນຂ່າວສານການທ່ອງທ່ຽວ
ຕິດຕໍ່: ທ່ານ ບົວສອນ ພົມມະບຸດ
ໂທ: +856 (0)20 94290543


ສໍາລັບລາຄາ
ແມ່ນແຕກຕ່າງກັນ ຂຶ້ນກັບຈໍານວນຄົນ ແລະ ບໍລິການເສີມ (ໄກ້ນໍາທ່ຽວຈາກວັດພູ, ໄກ້ນໍາທ່ຽວຈາກທ້ອງຖິ່ນ, ຄ່າເຊົ່າເຮືອໄປໂຕ໊ະໂມ໊ະ...)


ພິພິທະພັນວັດພູ
ຕິດຕໍ່: ທ່ານ ສຸບັນ ກັນທາພັນ
Tel: + 856 (0)20 55 76 92 21

Email: information@tourismchampasak.com
Website: www.vatphou-champassak.com
www.tourismchampasak.org


ສະແກນ ຄິວອາໂຄດ ດ້ານລຸ່ມ ເພື່ອເບິ່ງຕື່ມ ຂໍ້ມູນກ່ຽວກັບ ເສັ້ນທາງທ່ອງທ່ຽວ







## ຈະເຂົ້າເຖິງໄດ້ທາງໃດແດ່?

### ທາງອາກາດ

ຈາກນະຄອນຫລວງວຽງຈັນ (ຖ້ຽວບິນ2 ຖ້ຽວຕໍ່ມື້ ) ແລະ ຈາກຫຼວງພະບາງ (3 ຖ້ຽວຕໍ່ອາທິດ).





### ທາງບົກ

- ຈາກອຸບົນຣາຊະທານີ/ປະເທດໄທ (ຜ່ານດ່ານຊ່ອງເມັກ) ປະມານ. 160ກິໂລແມັດ ແລະ ໃຊ້ເວລາຂີ່ລົດປະມານ 2ຊົ່ວໂມງເຄິ່ງ.
- ຈາກສະໜາມບິນສາກົນປາກເຊ ຂຶ້ນລົດແທັກຊີ ຫຼື ລົດຕູ້ (ປະມານ 36ກິໂລແມັດ ໃຊ້ເວລາຂີ່ລົດປະມານ 45ນາທີ)
- ຈາກຕະຫຼາດດາວເຮືອງ ແລະ ຄິວລົດເມໃນໃຈກາງເມືອງປາກເຊ ປະມານ30ກິໂລແມັດ ໃຊ້ເວລາຂີ່ລົດປະມານ 35ນາທີ (ລົດອອກທຸກໆເຊົ້າ).

### ທາງເຮືອ

ມີບໍລິການເຮືອທ້ອງຖິ່ນຕາມການຮ້ອງຂໍ (ຕິດຕໍ່ສູນຂໍ້ມູນຂ່າວສານການທ່ອງທ່ຽວ ຫຼືສອບຖາມຂໍ້ມູນເພີ່ມເຕີມຈາກທີ່ພັກຂອງທ່ານ). ການລ່ອງເຮືອໃນແມ່ນໍ້າຂອງລະຫວ່າງເມືອງປາກເຊ ແລະ ຈໍາປາສັກ ໃຊ້ເວລາປະມານ 2 ຊົ່ວໂມງ.

ສະຖານີລົດເມຫຼັກ ໃນເມືອງປາກເຊ ເປັນສູນກາງສໍາຄັນທີ່ເຊື່ອມຕໍ່ ນະຄອນຫຼວງວຽງຈັນ, ທ່າແຂກ, ສະຫວັນນະເຂດ ແລະ ປະເທດໄທ (ອຸບົນຣາຊະທານີ, ບາງກອກ) ແລະ ກໍາປູເຈຍ (ສຽມຣຽບ, ພະນົມເປັນ).



### ຈະພັກຢູ່ໃສ ?

ທ່ານມີທາງເລືອກຫຼາກຫຼາຍກ່ຽວກັບທີ່ພັກໃນເມືອງຈໍາປາສັກ, ຈາກເຮືອນພັກທໍາມະດາຈົນເຖິງ ຣີສອດລະດັບ 4ດາວ. ນອກນັ້ນຍັງມີໂຮມສະເຕ ທີ່ທ່ານສາມາດສໍາຜັດກັບຊີວິດທ້ອງຖິ່ນຢູ່ດອນແດງ (ເບິ່ງແຜນທີ່). ສໍາລັບຂໍ້ມູນເພີ່ມເຕີມ, ຕິດຕໍ່ສູນຂໍ້ມູນຂ່າວສານການທ່ອງທ່ຽວ



# ແຜນທີ່ທ່ອງທ່ຽວເມືອງຈໍາປາສັກ



ມໍລະດົກ
ວັດທະນະທໍາ
ທໍາມະຊາດ
ປະຫວັດສາດ
ວິຖີຊີວິດລຽບງ່າຍ